ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 021 214 013-4

3389

ເລກທີ________/ກອຢ

ນະຄອນຫລວງ, ວັນທີ 27 APR 2020

# ໜັງສືແຈ້ງການ

ຮຽນ: ທ່ານ ຫົວໜ້າ ພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ

ເລື່ອງ: ເອົາໃຈໃສ່ໃນການຕິດຕາມກວດກາ ແລະ ເຝົ້າລະວັງກ່ຽວກັບຄຸນນະພາບຂອງຜ້າອັດປາກ-ດັງ ແລະ ເຈວລ້າງມື ໃນຂອດການຈໍລະຈອນຈໍາໜ່າຍ

- ອີງຕາມ ກົດໝາຍວ່າດ້ວຍຢາແລະຜະລິດຕະພັນການແພດ (ສະບັບປັບປຸງ) ເລກທີ07/ສພຊ, ລົງວັນທີ 21 ທັນວາ 2011
- ອີງຕາມ ຜົນການວິໄຈກວດກາຄຸນນະພາບຂອງຜະລິດຕະພັນຜ້າອັດປາກ-ດັງ ແລະ ເຈວລ້າງມື
- ອີງຕາມ ການຕົກລົງເຫັນດີຂອງກອງປະຊຸມຄັ້ງວັນທີ 20 ເມສາ 2020

ຜ່ານການລົງຕິດຕາມ, ກວດກາ ແລະ ວິໄຈຄຸນນະພາບຂອງຜ້າອັດປາກ-ດັງ ທາງດ້ານກາຍະພາບ (Physical) ແລະ ຄຸນນະພາບຂອງເຈວລ້າງມື ທີ່ປັດຈຸບັນເຫັນວ່າມີການຈໍລະຈອນຈໍາໜ່າຍຫຼາກຫຼາຍ ຊື່ການຄ້າ ຢູ່ ສປປ ລາວ ໃນນັ້ນລວມທັງທີ່ມາຈາກແຫຼ່ງສະໜອງທີ່ຖືກຕ້ອງ ແລະ ບໍ່ຖືກຕ້ອງຕາມລະບຽບການຄຸ້ມຄອງດ້ານຢາ ແລະ ຜະລິດຕະພັນການແພດ ຊຶ່ງບໍ່ສາມາດຮັບປະກັນດ້ານຄຸນນະພາບ ແລະ ມາດຕະຖານຂອງຜະລິດຕະພັນດັ່ງກ່າວ. ເພື່ອເຮັດໃຫ້ວຽກງານການປ້ອງກັນ ແລະ ຄວບຄຸມພະຍາດອັກເສບປອດຮຸນແຮງ ຈາກການຕິດເຊື້ອຈຸລະໂລກ ໂກໂຣນາ ສາຍພັນໃໝ່ (COVID-19) ໃຫ້ມີປະສິດທິຜົນດີ ໂດຍການນໍາໃຊ້ຜ້າອັດປາກ-ດັງ ແລະ ເຈວລ້າງມື ທີ່ຮັບປະກັນດ້ານມາດຕະຖານ ແລະ ຄຸນນະພາບ, ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງຈົ່ງຊີ້ນໍາຕໍ່ຂະແໜງອາຫານ ແລະ ຢາ ນະຄອນຫຼວງ-ແຂວງ ແລະ ໜ່ວຍງານອາຫານ ແລະ ຢາ ເມືອງ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງລຸ່ມນີ້:

1. ເອົາໃຈໃສ່ຕິດຕາມກວດກາ, ບັນທຶກເກັບກໍາຂໍ້ມູນ ແຫຼ່ງທີ່ມາ ແລະ ລາຄາຊື້-ຂາຍ ພ້ອມໃຫ້ຄໍາແນະນໍາແກ່ຜູ້ປະກອບການເພື່ອຄັດເລືອກຜ້າອັດປາກ-ດັງ ເຂົ້າມາຈໍາໜ່າຍ ທີ່ປະກອບມີຊະນິດ ທີ່ນໍາໃຊ້ທາງດ້ານການແພດ ສາມາດກັ່ນກອງເຊື້ອພະຍາດໄດ້ ແລະ ຊະນິດທີ່ນໍາໃຊ້ແບບປ້ອງກັນຝຸ່ນລະອອງທົ່ວໄປ ຫຼື ນໍາໃຊ້ໃນສະຖານທີ່ ທີ່ບໍ່ມີຄວາມສ່ຽງ ຫຼື ໃຊ້ໃນສັງຄົມທີ່ບໍ່ມີການໃກ້ຊິດກັບກໍລະນີສົງໃສການຕິດເຊື້ອ ຫຼື ພົວພັນກັບພະຍາດ COVID-19 (ຕາມລາຍລະອຽດທີ່ໄດ້ຄັດຕິດມາພ້ອມນີ້)
2. ສໍາລັບເຈວລ້າງມືທີ່ທາງອົງການອະນາໄມໂລກໄດ້ແນະນໍາໃຫ້ນໍາໃຊ້ໃນການຂ້າເຊື້ອພະຍາດ COVID-19 ແມ່ນຈະຕ້ອງບັນຈຸປະລິມານເຫຼົ້າ 70% (70• ຂຶ້ນໄປ)
3. ຖ້າພົບເຫັນເຈວລ້າງມືທີ່ບໍ່ບັນລຸມາດຕະຖານ (ຕາມບັນຊີທີ່ຄັດຕິດມາພ້ອມນີ້) ແມ່ນໃຫ້ຍຶດ ແລະ ເກັບຮັກສາໄວ້ຂະແໜງອາຫານ ແລະ ຢາ ພ້ອມບັນທຶກເກັບກໍາຂໍ້ມູນໃນການສະໜອງ ຫຼື ແຫຼ່ງທີ່ມາລະອຽດ ແລ້ວລາຍງານມາຍັງກອງກວດກາອາຫານ ແລະ ຢາ ເພື່ອສັງລວມ ແລະ ວາງມາດຕະການຕາມລະບຽບຫຼັກການ ແລ້ວລາຍງານຂັ້ນເທິງເພື່ອໃຫ້ທິດຊີ້ນໍາ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການນີ້ດ້ວຍ.

ຫົວໜ້າ ກົມ

ດຣ.ສົມທະວີ ຈາງວິສົມມິດ

## I. ບັນຊີລາຍການຜ້າອັດປາກ-ດັງ ທີ່ໄດ້ຜ່ານການກວດກາຄຸນນະພາບດ້ານກາຍະພາບ (Physical) ບໍ່ບັນລຸມາດຕະຖານຜ້າອັດປາກ-ດັງ ເພື່ອນຳໃຊ້ທາງດ້ານການແພດ ແຕ່ສາມາດນຳໃຊ້ເພື່ອປ້ອງກັນຝຸ່ນລະອອງທົ່ວໄປ ຫຼື ນຳໃຊ້ໃນສະຖານທີ່ ທີ່ບໍ່ມີຄວາມສ່ຽງ ຫຼື ໃຊ້ໃນສັງຄົມທີ່ບໍ່ມີການໃກ້ຊິດກັບກໍລະນີສົງໃສການຕິດເຊື້ອ ຫຼື ພົວພັນກັບພະຍາດ COVID-19

| ລ/ດ | ຊື່ການຄ້າ | ສ່ວນປະກອບ | ຊຸດຜະລິດ | ໂຮງງານຜະລິດ | ປະເທດ | ໝາຍເຫດ |
|---|---|---|---|---|---|---|
| 1. | Quốc Bảo | 4 ຊັ້ນ: ແຕ່ລະຊັ້ນເປັນແພຊະນິດດຽວກັນ | N/A | công ty TNHH sản xuất thương mại thiết bị Quốc Bảo | Vietnam |  |
| 2 | 4N JADE | 4 ຊັ້ນ:<br>1.ຊັ້ນນອກມີສີຟ້າ ເປັນ Popypropylene Spunbond Non-Woven Fabric<br>2. ຊັ້ນກາງມີ 2 ຊັ້ນ ແຕ່ລະຊັ້ນເປັນ Popypropylene Spunbond Non-Woven Fabric<br>3. ຊັ້ນໃນ ສີຂາວ Popypropylene Spunbond Non-Woven Fabric | N/A | CÔNG TY TNHH DUY NGỌC BẮC NINH, XuanLai, Giabinh District, Bac ninh province | Vietnam |  |
| 3 | Health Mask | 4 ຊັ້ນ:<br>1.ຊັ້ນນອກມີສີຟ້າ ເປັນ Popypropylene Spunbond Non-Woven Fabric<br>2. ຊັ້ນກາງມີ 2 ຊັ້ນ ແຕ່ລະຊັ້ນເປັນ Popypropylene Spunbond Non-Woven Fabric<br>3. ຊັ້ນໃນ ສີຂາວ Popypropylene Spunbond Non-Woven Fabric | N/A | VINAPRO T&T Equipment Trading & Manufacturing LTD, 87/5, Rd 3., BHHOA Ward, Binh Tan District, Ho Chi Minh City | Vietnam |  |
| 4 | Lợi Thành | 4 ຊັ້ນ:<br>1.ຊັ້ນນອກມີ 2ຊັ້ນ (ຟ້າ-ຂາວ) ເປັນ Popypropylene Spunbond Non-Woven Fabric<br>2.ຊັ້ນກາງ ສີຂາວ ເປັນ Popypropylene Spunbond Non-Woven Fabric<br>3. ຊັ້ນໃນ ສີຂາວ Popypropylene Spunbond Non-Woven Fabric | N/A | CÔNG TY TNHH DUY NGỌC , HOI QUAN Village, Tuong Giang, Tu Son District, Bac Ninh | Vietnam |  |

| | | | | | | |
|---|---|---|---|---|---|---|
| 5 | HAPAPOLO (KHAU TRANG 4 LOP) | 4 ຊັ້ນ: 1.ຊັ້ນນອກ 2 ແຜ່ນ ສີຟ້າPopypropylene Spunbond Non-Woven Fabric<br>2. ຊັ້ນກາງເປັນສີຂາວ  Popypropylene Spunbond Non-Woven Fabric<br>3. ຊັ້ນໃນສີຂາວ  Popypropylene Spunbond Non-Woven Fabric | 032020 | CÔNG TY TNHH DUY NGỌC , Xuan Lai, Xuan Lai, Gia Binh District, Bac Ninh | Vietnam |  |
| 6 | XL Mask | 4 ຊັ້ນ: 1.ຊັ້ນນອກ 2 ແຜ່ນ ສີຟ້າPopypropylene Spunbond Non-Woven Fabric<br>2. ຊັ້ນກາງເປັນສີຂາວ  Popypropylene Spunbond Non-Woven Fabric<br>3. ຊັ້ນໃນສີຂາວ  Popypropylene Spunbond Non-Woven Fabric | 010320 | Công ty Cổ Phần Giải Pháp Xuân Lai , 10, Dai phuc district, Bac Ninh province | Vietnam |  |
| 7 | TRALY MASK | 4 ຊັ້ນ: 1.ຊັ້ນນອກ 2 ແຜ່ນ ສີຟ້າPopypropylene Spunbond Non-Woven Fabric<br>2. ຊັ້ນກາງເປັນສີຂາວ  Popypropylene Spunbond Non-Woven Fabric<br>3. ຊັ້ນໃນສີຂາວ  Popypropylene Spunbond Non-Woven Fabric | N/A | Trang Ly Pharma Trade Co., Ltd, 05G19, Thanh Cong Village, Ba Dinh district, Hanoi province | Vietnam |  |
| 8 | Thái Dương | 4 ຊັ້ນ: 1.ຊັ້ນນອກ 2 ແຜ່ນ ສີຟ້າPopypropylene Spunbond Non-Woven Fabric<br>2. ຊັ້ນກາງເປັນສີຂາວ  Popypropylene Spunbond Non-Woven Fabric<br>3. ຊັ້ນໃນສີຂາວ  Popypropylene Spunbond Non-Woven Fabric | N/A | Gia Binh, Gia Binh district, Bac Ninh province | Vietnam |  |
| 9 | Quyền Anh | 4 ຊັ້ນ: 1.ຊັ້ນນອກມີສີຟ້າ ເປັນ Popypropylene Spunbond Non-Woven Fabric<br>2. ຊັ້ນກາງມີ 2 ຊັ້ນ ແຕ່ລະຊັ້ນເປັນ Popypropylene Spunbond Non-Woven Fabric<br>3. ຊັ້ນໃນ ສີຂາວ Popypropylene Spunbond Non-Woven Fabric | N/A | Xuan Lai, Gia Binh district, Bac Ninh province | Vietnam |  |
| 10 | Van Anh | 4 ຊັ້ນ: 1.ຊັ້ນນອກມີສີຟ້າ ເປັນ Popypropylene Spunbond Non-Woven Fabric<br>2. ຊັ້ນກາງມີ 2 ຊັ້ນ ແຕ່ລະຊັ້ນເປັນ Popypropylene Spunbond Non-Woven Fabric<br>3. ຊັ້ນໃນ ສີຂາວ Popypropylene Spunbond Non-Woven Fabric | N/A | Van Anh village, Gia Binh district, Bac Ninh province | Vietnam |  |

## II. ບັນຊີລາຍການຜະລິດຕະພັນເຈວລ້າງມືທີ່ບໍ່ບັນລຸມາດຕະຖານນຳໃຊ້ຂ້າເຊື້ອພະຍາດ

| ລ/ດ | ຊື່ການຄ້າ | ສ່ວນປະກອບ | ຊຸດຜະລິດ | ໂຮງງານຜະລິດ | ປະເທດ | ໝາຍເຫດ |
|---|---|---|---|---|---|---|
| 1 | BRO&SIS 500ML | ETHYL ALCOHOL | N/A | N/A | N/A |  |
| 2 | ON1 500 ml | N\A | N/A | N/A | Vietnam |  |
| 3 | LES ARTISAN LAO 450 ml | Alcohol 70 % AG | 2003051 | Les artisans | Lao PDR |  |
| 4 | ALCOHOL gel 75 % 500 ml | Acohol 75% | N/A | N/A | Thailand |  |